# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 26 ມີນາ 2017(3-26-2017)

---

# ຊັຍຊະນະທາງຄວາມເຊື່ອ

ແມ່ນຫຍັງທີ່ທ່ານບໍ່ສາມາດເບິ່ງເຫັນ ແຕ່ທ່ານຮູ້ວ່າມັນຢູ່ທີ່ນັ້ນ?

**ຈຸດສຳຄັນໃນບົດຮຽນ**: ຄວາມເຊື່ອຂອງຂ້າພະເຈົ້າໃນພຣະເຈົ້າເຮັດໃຫ້ຂ້າພະເຈົ້າມີຊັຍຊະນະ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ມັນເປັນການຍາກທີ່ຈະຮູ້ວ່າຕັ້ງແຕ່ນີ້ໄປຈະເຊື່ອຢ່າງໃດ. ເຄືອຂ່າຍຕິດຕໍ່ທາງດ້ານຄອມພິວເຕີແມ່ນເຕັມດ້ວຍ " ຂ່າວ " ໃນຫົວຂໍ້ທີ່ຍາວຍືດຈາກຂ່າວການເມືອງໄປຫາຂ່າວຢາປົວພຍາດແລະໄປເຖິງຂ່າວການວາງແຜນ, ແລະນັກຂຽນທຸກຄົນມັກຈະອວດອ້າງວ່າເຣື່ອງລາວຂອງລາວເປັນເຣື່ອງຈິງ ເຖິງແມ່ນວ່າ " ຄວາມຈິງ " ທີ່ລາວນຳສເນີນັ້ນຕາມປົກກະຕິແລ້ວກໍມີຂໍ້ຂັດແຍ້ງກັນແລະກັນ. ເຖິງຈະເປັນເຣື່ອງທີ່ບໍ່ດີ, ເມື່ອທ່ານຕັ້ງຄຳຖາມຕໍ່ສິ່ງທີ່ທ່ານອ່ານ, ຍັງມີບາງຄົນໃຫ້ຄຳສັບເປັນສຳນວນວ່າ: " ຂ້າພະເຈົ້າຮູ້ວ່າມັນຍາກທີ່ຈະເຊື່ອ, ແຕ່ຍອມຮັບວ່າມັນເປັນຄວາມຈິງ. ຈົ່ງເຊື່ອເຖີດ." ແມ່ນແທ້ບໍ? ທີ່ວ່າຄວາມເຊື່ອແມ່ນການກະໂດດຂ້າມໄປຫາສິ່ງທີ່ເຊື່ອ ເໝືອນກັບຕາບອດ?

ຕັ້ງແຕ່ຕົ້ນຈົນຈົບຂອງພຣະຄັມພີ, ພວກເຮົາເຫັນຄວາມຄິດເຣື່ອງຂອງຄວາມເຊື່ອທີ່ແຕກຕ່າງກັນໂດຍທົ່ວໄປ. ແທ້ຈິງແລ້ວ, ຜູ້ຂຽນພຣະທັມເຮັບເຣີຊີ້ໃຫ້ເຫັນຄວາມໝາຍໃນສ່ວນທີ່ສຳຄັນຂອງຄວາມເຊື່ອ. ໃນເຮັບເຣີ 11. ພວກເຮົາໄດ້ເຫັນການເຕືອນສະຕິວ່າເຂົາເຈົ້າບໍ່ໄດ້ເຊື່ອໂດຍທີ່ເບິ່ງບໍ່ເຫັນຫຍັງ. ເຂົາເຈົ້າມີຄວາມເຊື່ອແທ້ ເຖິງແມ່ນວ່າເມື່ອພຣະເຈົ້າເອີ້ນເຂົາເຈົ້າໃຫ້ເຊື່ອໃນສິ່ງທີ່ບໍ່ໜ້າຈະເປັນໄປໄດ້.

ໃຫ້ເຮົາຮັບເອົາຄວາມເຂົ້າໃຈທີ່ແຕກຕ່າງຂອງຄວາມເຊື່ອຈາກສິ່ງທີ່ຄົນໃນໂລກໄດ້ເວົ້າເຖິງ . ເຮັບເຣີ 11 ຊີ້ໃຫ້ພວກເຮົາເຫັນຕົວຢ່າງຊີວິດຈິງຂອງບັນດາຜູ້ປະເຊີນກັບສະພາບການ ແລະດຳເນີນຊີວິດດ້ວຍຄວາມເຊື່ອທ່າມກາງສະຖານະການເຫລົ່ານັ້ນ. ເຂົາເຈົ້າມີຊັຍຊະນະເພາະຄວາມເຊື່ອຂອງເຂົາເຈົ້າ.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

**ສຶກສາພຣະຄັມພີ**

**1. <u>ເຮັບເຣີ 11:1-3:</u>**

*1ອັນໜຶ່ງ, ຄວາມເຊື່ອຄືຄວາມແນ່ນອນໃຈໃນສິ່ງທີ່ເຮົາຫວັງໄວ້ ເປັນຄວາມຕາຍໃຈເຖິງສິ່ງທີ່ຍັງບໍ່ເຫັນກັບຕາ. 2ເພາະດ້ວຍຄວາມເຊື່ອນີ້ເອງພວກເຖົ້າເກົ່າບູຮານໄດ້ຮັບຄຳພະຍານອັນດີ. 3ໂດຍຄວາມເຊື່ອນີ້ເຮົາທັງຫລາຍຈຶ່ງເຂົ້າໃຈວ່າໂລກຈັກກະວານນີ້ໄດ້ຖືກສ້າງຂຶ້ນດ້ວຍພຣະທັມຂອງພຣະເຈົ້າ ດັ່ງນັ້ນສິ່ງທີ່ຕາເຫັນຢູ່ກໍບໍ່ໄດ້ເກີດຈາກສິ່ງທີ່ປາກົດໃຫ້ເຫັນ.*

ໃຫ້ເລີ້ມທຳຄວາມເຂົ້າໃຈຢ່າງຈະແຈ້ງວ່າອັນໃດຄືຄວາມເຊື່ອ. ຂໍ້ 1 ໄດ້ອະທິບາຍວ່າຄວາມເຊື່ອທຳງານຢ່າງໃດ ແລະຄວາມເຊື່ອໄດ້ເຮັດຫຍັງແດ່:

- ຄວາມເຊື່ອແມ່ນຄວາມເຊື່ອໝັ້ນພາຍໃນໃຈ. ຄວາມເຊື່ອໝາຍຄວາມວ່າໄວ້ວາງໃຈພຣະເຈົ້າແລະເຊື່ອໃນ

ພຣະອົງ( ທັງຮູ້ອີກວ່າ) ພຣະອົງຈະເຮັດສິ່ງທີ່ພຣະອົງເວົ້າວ່າພຣະອົງຈະເຮັດ ເພາະພຣະອົງເຮັດຢູ່ສເມີ.

- ຄວາມເຊື່ອໃຫ້ຄວາມໝັ້ນໃຈແກ່ເຮົາ. ຄວາມເຊື່ອມີແກ່ນສານ. ຄວາມເຊື່ອເຮັດໃຫ້ໝັ້ນໃຈເທິງພື້ນຖານຂອງຄວາມເປັນຈິງໃນສິ່ງທີ່ພຣະເຈົ້າຊົງເຮັດແລ້ວແລະຊົງໄດ້ກ່າວໄວ້ແລ້ວ.

ຕ້ອງການຕົວຢ່າງບໍ? ພວກເຮົາຮູ້ວ່າໂລກຈັກກະວານມີຢູ່ແທ້; ມັນຢູ່ທີ່ນີ້ແລ້ວທີ່ພວກເຮົາສາມາດຈັບບາຍໄດ້, ເຫັນໄດ້, ແລະຄົ້ນຄວ້າເບິ່ງໄດ້. ເຖິງປານນັ້ນທັງໝົດນີ້ພວກເຮົາກໍໄດ້ຮຽນແລະຍັງສືບຕໍ່ຮຽນຢູ່ກ່ຽວກັບການຊົງສ້າງ, ວິທະຍາສາດຢ່າງດຽວບໍ່ສາມາດໃຫ້ຄຳຕອບໄດ້ຕໍ່ຣາກຖານຄຳຖາມກ່ຽວກັບການເປັນຢູ່ຂອງຈັກກະວານ ໂດຍສະເພາະຄຳຖາມທີ່ວ່າ " ດ້ວຍເຫດໃດ?" ຈັກກະວານນີ້ເກີດຂຶ້ນມາໂດຍບັງເອີນຫລື? ຫຼືເກີດຂຶ້ນຢ່າງມີຈຸດປະສົງ ຫຼືເປັນແຜນການຂອງໃຜຜູ້ນຶ່ງ.

ຄຣິສຕຽນຮູ້ຄຳຕອບຕໍ່ຄຳຖາມທີ່ວ່າ " ດ້ວຍເຫດໃດ?" ເພາະຄວາມເຊື່ອຂອງເຮົາ: "ໂດຍຄວາມເຊື່ອພວກເຮົາຈຶ່ງເຂົ້າໃຈວ່າໂລກຈັກກະວານນີ້ແມ່ນຖືກສ້າງຂຶ້ນໂດຍພຣະຄຳຂອງພຣະເຈົ້າ. "ພຣະເຈົ້າຊົງສ້າງທຸກສິ່ງທີ່ພວກເຮົາເຫັນເພື່ອເປັນສະຖານທີ່ໆພວກເຮົາສາມາດຊື່ນຊົມຍິນດີຕໍ່ຄວາມສັມພັນກັບພຣະອົງ. ພວກເຮົາສາມາດເຂົ້າໃຈຄວາມຈິງນີ້ ໂດຍການໄດ້ຍິນພຣະຄຳຂອງພຣະເຈົ້າແລະເຊື່ອສິ່ງທີ່ພຣະອົງຊົງກ່າວໄວ້.

ໂລກຈັກກະວານຂອງເຮົາບໍ່ໄດ້ເກີດຂຶ້ນໂດຍບັງເອີນ; ແຕ່ເປັນການທຳງານຢ່າງຕັ້ງໃຈຂອງພຣະເຈົ້າຜູ້ຊົງສຳແດງພຣະອົງເອງໃນຖານະເປັນຜູ້ສ້າງ. ພຣະເຈົ້າໄດ້ເລີ້ມຕົ້ນດ້ວຍຄວາມວ່າງເປົ່າ ແລະນຳເອົາຄວາມວ່າງເປົ່າທັງໝົດໃຫ້ເກີດມີຊີວິດຂຶ້ນ. ດັ່ງນັ້ນ, ພວກເຮົາສາມາດມີຄວາມໝັ້ນໃຈແລະມີຄວາມເຊື່ອວ່າພຣະເຈົ້າຍັງສືບຕໍ່ທຳງານຕາມພຣະປະສົງຂອງພຣະອົງໃນໂລກນີ້ ແລະທຳງານໃນຊີວິດຂອງເຮົາດ້ວຍ.

## 2. <u>ເຮັບເຣີ 11: 4</u>:

*[4]ເພາະອາເບັນມີຄວາມເຊື່ອນີ້ ຈຶ່ງໄດ້ນຳເອົາເຄື່ອງບູຊາອັນຖືກຕ້ອງກວ່າເຄື່ອງບູຊາຂອງກາອິນມາຖວາຍແດ່ພຣະເຈົ້າ ຊຶ່ງເຮັດໃຫ້ເພິ່ນໄດ້ຮັບຄຳພະຍານວ່າເປັນຄົນຊອບທັມ ພຣະເຈົ້າກໍໄດ້ຊົງເປັນພະຍານແກ່ຂອງຖວາຍຂອງເພິ່ນ ເຖິງແມ່ນວ່າອາເບັນຕາຍແລ້ວກໍຈິງ ແຕ່ເພາະມີຄວາມເຊື່ອເພິ່ນຈຶ່ງຍັງເວົ້າຢູ່.*

ຫຼັງຈາກຜູ້ຂຽນໄດ້ບັນລະຍາຍຄວາມເຊື່ອທີ່ແທ້ຈິງໃນຂໍ້ 1-3, ຜູ້ຂຽນຍັງໄດ້ໃຫ້ຫຼາຍໆຕົວຢ່າງຂອງບຸກຄົນຜູ້ທີ່ສະແດງໃຫ້ເຫັນເຖິງຄວາມເຊື່ອ. ວິຣະບຸຣຸດໃນຄວາມເຊື່ອເຫຼົ່ານັ້ນແມ່ນກຸ່ມຄົນເຊັ່ນດຽວກັບພວກເຮົາຜູ້ທີ່ເຫັນການທຳງານຂອງພຣະເຈົ້າໃນໂລກນີ້ໃນສມັຍຂອງເຂົາເຈົ້າແລະເຫັນທົນທາງຂອງເຂົາເຈົ້າ ບາງເທື່ອກໍອັສຈັນແລະໃນທາງທີ່ມີຄວາມກ້າຫານ ທີ່ເຂົ້າຮ່ວມກັບພຣະອົງ. ພວກເຮົາສາມາດເຮັດໄດ້ເຊັ່ນດຽວກັນ.

ຕົວຢ່າງອັນທຳອິດມາຈາກຊີວິດຂອງອາເບນ, ບຸກຄົນທີ່ຖືກບັນທຶກໄວ້ໃນພຣະທັມປະຖົມມະການບົດ 4: 1-10. ເຫດການທີ່ຮ້າຍແຮງຂອງກາອິນແລະອາເບນເປັນເລື່ອງທີ່ຄຸ້ນເຄີຍກັນດີຖ້າມກາງຄຣິສຕຽນຂອງພວກເຮົາ, ເຖິງແມ່ນວ່າຈຳນວນຄຳຖາມໄດ້ເພີ້ມຂຶ້ນໂດຍບໍ່ມີຄຳຕອບ. ຕົວຢ່າງ: ເປັນຫຍັງພຣະເຈົ້າປະຕິເສດເຄື່ອງຖວາຍຂອງກາອິນແຕ່ພໍໃຈກັບການຖວາຍຂອງອາເບນ?

ພວກເຮົາບໍ່ໄດ້ຮູ້ຫລາຍເທົ່າໃດໃນພຣະຄັມພີກ່ຽວກັບຄວາມແຕກຕ່າງລະຫວ່າງການຖວາຍສອງຢ່າງ, ແຕ່ໃນພຣະຄັມພີໄດ້ໃຫ້ຄຳເຫັນໄວ້. ຕົວຢ່າງ, ອາເບນໄດ້ລະມັດລະວັງໃນການເລືອກເອົາສັດຂອງລາວເພື່ອຈະຖວາຍໃຫ້ພຣະເຈົ້າ ( ປະຖົມມະການ 4. 4 ). ອີກຝ່າຍນຶ່ງ, ກາອິນເບິ່ງຄືບໍ່ເອົາໃຈໃສ່ໃນການເລືອກເຄື່ອງຖວາຍຂອງລາວ (ປະຖົມມະການ4:3 ). ເວົ້າອີກຢ່າງນຶ່ງ, ບໍ່ແມ່ນເຄື່ອງຖວາຍບູຊາທີ່ເຮັດໃຫ້ເປັນທີ່ຍອມຮັບຫຼືບໍ່ຍອມຮັບ; ແຕ່ແມ່ນນິສັຍທີ່ຢູ່ເບື້ອງຫລັງຂອງການຖວາຍເຄື່ອງບູຊາເຫຼົ່ານັ້ນ.

ດັ່ງທີ່ບັນທຶກໃນຕອນຕົ້ນ. ຄວາມເຊື່ອແມ່ນຄວາມໝັ້ນໃຈແລະເຊື່ອໄວ້ວາງໃຈໃນພຣະເຈົ້າ; ມັນເປັນການຕອບສນອງວ່າພຣະເຈົ້າແມ່ນໃຜ, ພຣະອົງໄດ້ເວົ້າຫຍັງ, ແລະພຣະອົງຊົງທຳງານຢ່າງໃດ. ອາເບນໄດ້ກະທຳຕາມຄວາມເຊື່ອໝັ້ນແລະຄວາມໄວ້ວາງໃຈ ຜ່ານການນະມັສການຂອງລາວ. ກາອິນບໍ່ມີຄວາມເຊື່ອໃນພຣະເຈົ້າ, ຜົນທີ່ຕາມມາກໍຄື ການຖວາຍຂອງກາອິນເປັນພຽງພິທີກັມ, ບໍ່ໄດ້ເປັນການກະທຳດ້ວຍຄວາມເຊື່ອແລະການນະມັສການທີ່ແທ້ຈິງ ການຖວາຍຂອງກາອິນບໍ່ໄດ້ມີຄວາມໝາຍອັນໃດຕໍ່ລາວເອງ. ດັ່ງນັ້ນ, ມັນຈຶ່ງບໍ່ມີຄວາມໝາຍເທົ່າໃດຕໍ່ພຣະເຈົ້າ.

ຄວາມເຊື່ອໝັ້ນຂອງເຮົາວ່າພຣະເຈົ້າເທົ່ານັ້ນຊົງເປັນພຣະເຈົ້າ ແລະບໍ່ມີພຣະອື່ນເໝືອນພຣະອົງທີ່ສົ່ງຜົນຕໍ່ການເລືອກແລະການກະທຳຂອງເຮົາ. ໃນເມື່ອບໍ່ມີພຣະອື່ນໃດຍິ່ງໃຫຍ່ກວ່າພຣະເຈົ້າ, ເປັນຫຍັງພວກເຮົາຈຶ່ງຖວາຍສິ່ງເລັກນ້ອຍແທນທີ່ຈະເປັນສິ່ງທີ່ດີທີ່ສຸດຂອງເຮົາໃຫ້ແກ່ພຣະອົງ?

### 3. <u>ເຮັບເຣີ 11:5-6</u>:

*[5]ເພາະເອໂນກມີຄວາມເຊື່ອນີ້ພຣະເຈົ້າຈຶ່ງຊົງຮັບເພິ່ນຂຶ້ນໄປ ເພື່ອບໍ່ໃຫ້ເພິ່ນພົບກັບຄວາມຕາຍ ແລະບໍ່ມີຜູ້ໃດພົບເຫັນເພິ່ນ ເພາະພຣະເຈົ້າຊົງຮັບເອົາເພິ່ນໄປແລ້ວ ອັນໜຶ່ງ, ກ່ອນທີ່ຊົງຮັບເອົາເພິ່ນຂຶ້ນໄປນັ້ນ ມີຜູ້ເປັນພະຍານວ່າເພິ່ນເປັນທີ່ພໍພຣະທັຍພຣະເຈົ້າ. [6]ແຕ່ຖ້າບໍ່ມີຄວາມເຊື່ອແລ້ວຈະເປັນທີ່ພໍພຣະທັຍພຣະເຈົ້າບໍ່ໄດ້ ເພາະວ່າຜູ້ທີ່ມາເຝົ້າພຣະເຈົ້າໄດ້ນັ້ນຕ້ອງເຊື່ອວ່າພຣະອົງຊົງພຣະຊົນຢູ່ ແລະພຣະອົງຊົງເປັນຜູ້ປະທານລາງວັນໃຫ້ແກ່ທຸກຄົນທີ່ສແວງຫາພຣະອົງ.*

ຜູ້ຂຽນພຣະທັມເຮັບເຣີ ໄດ້ກ່າວເຖິງເອໂນກເປັນຕົວຢ່າງທີສອງຂອງບຸກຄົນທີ່ດຳເນີນຊີວິດຕາມຄວາມເຊື່ອ. ພວກເຮົາຮູ້ພຽງເລັກນ້ອຍກ່ຽວກັບເອໂນກ, ແຕ່ສິ່ງທີ່ພວກເຮົາຮູ້ນັ້ນເປັນເລື່ອງທີ່ອັສຈັນ. ທັງໝົດຂອງບົດທີ່ຫ້າຂອງປະຖົມມະການແມ່ນໜັງສືປະວັດເຊື້ອສາຍທີ່ຈັດຕຽມເຮົາໃຫ້ໄປພົບອີກຄົນນຶ່ງໃນຄວາມເຊື່ອຊື່ໂນອາ( ປະຖົມມະການ 6: 1-9: 29 ແລະເຮັບເຣີ 11: 7 ).ເມື່ອພວກເຮົາອ່ານຜ່ານປະວັດເຊື້ອສາຍນີ້, ພວກເຮົາໄດ້ຮັບຄວາມປະທັບໃຈວ່າຊີວິດເບິ່ງຄືວ່າໄດ້ຮັບຄວາມຍຸດຕິທັມດີຫລັງຈາກຊ່ວງເວລາຂອງກາອິນແລະອາເບນ: ມະນຸດໄດ້ເກີດຂຶ້ນ, ມີການແຕ່ງງານ, ມີລູກ, ແລະຕາຍໄປ.

ຕໍ່ມາແມ່ນເລື່ອງຂອງເອໂນກ (ປະຖົມມະການ 5: 21- 24 ). ເມື່ອເອໂນກມີອາຍຸ 365 ປີ, " ທ່ານບໍ່ໄດ້ຢູ່ທີ່ນັ້ນ" ( ຂໍ້ 24). ດ້ວຍເຫດໃດ? ເພາະ "ພຣະເຈົ້າຮັບເອົາເພິ່ນໄປຢູ່ນຳ." ເອໂນກບໍ່ເຄີຍຕາຍ. ທ່ານໄດ້ຕິດຕາມພຣະເຈົ້າໃນຊີວິດຂອງທ່ານເພື່ອຈະເດີນໄປກັບພຣະເຈົ້າອີກຊົ່ວນິຣັນ. ສິ່ງທີ່ເຮົາຮູ້ກໍໝົດເທົ່ານັ້ນ. ຜູ້ຂຽນພຣະທັມເຮັບເຣີບັນທຶກໄວ້ວ່າ ຄວາມເຊື່ອໝັ້ນຂອງເອໂນກຕໍ່ອະນາຄົດໃນພຣະເຈົ້າ ເປັນກຸນແຈໄຂໄປສູ່ຄວາມຈິງໃໝ່ນີ້.

ຄືກັບຄຣູທີ່ດີຫຼາຍຄົນ, ຜູ້ຂຽນພຣະທັມເຮັບເຣີໄດ້ຢຸດເພື່ອເນັ້ນໜັກຈຸດສຳຄັນຂອງລາວ: "ຖ້າບໍ່ມີຄວາມເຊື່ອກໍເປັນໄປບໍ່ໄດ້ທີ່ຈະເປັນທີ່ພໍພຣະທັຍພຣະເຈົ້າ." ຄຣິສຕະຈັກຈະເນັ້ນເປັນພິເສດເລື່ອງຄວາມເຊື່ອຕ້ອງມາກ່ອນການງານ, ແລະພຣະຄັມພີໄດ້ຊ່ວຍເຮົາໃຫ້ເຂົ້າໃຈວ່າດ້ວຍເຫດໃດຄວາມເຊື່ອສຳຄັນກວ່າສິ່ງອື່ນ. ຖ້າປາສະຈາກຄວາມເຊື່ອການງານຈະບໍ່ເກີດຂຶ້ນ. ບໍ່ມີແຮງຈູງໃຈອັນໃດໃນການເຮັດວຽກງານຖ້າພວກເຮົາບໍ່ "ເຊື່ອວ່າພຣະອົງຊົງພຣະຊົນຢູ່ແລະພຣະອົງຈະປະທານລາງວັນໃຫ້ແກ່ຄົນທີ່ສແວງຫາພຣະອົງ." ພວກເຮົາດຳເນີນຊີວິດຕາມທາງທີ່ພວກເຮົາໃຊ້ຊີວິດເພາະພວກເຮົາຮູ້ວ່າພຣະເຈົ້າຊົງພຣະຊົນຢູ່. ພວກເຮົາເຮັດໃນສິ່ງທີ່ພວກເຮົາເຮັດເພາະພຣະເຈົ້າຊົງຢູ່ທີ່ນັ້ນດ້ວຍ. ພວກເຮົາດຳເນີນຊີວິດໃຫ້ເປັນທີ່ພໍພຣະທັຍພຣະເຈົ້າ ເພາະພວກເຮົາເຊື່ອວ່າພຣະເຈົ້າຈະປະທານລາງວັນໃຫ້ຜູ້ທີ່ສແວງຫາພຣະອົງ.

ແມ່ນຫຍັງຄືລາງວັນທີ່ພວກເຮົາສແວງຫາ? ຄວາມຮັ່ງມີ? ການມີຊື່ສຽງ? ບໍ່ແມ່ນດອກ. ພວກເຮົາຕ້ອງການຊັຍຊະນະທີ່ພຣະເຈົ້າໃຫ້ເອໂນກ ຄືຊີວິດນິຣັນໃນການເດີນໄປກັບພຣະເຈົ້າ. ພວກເຮົາສແວງຫາພຣະອົງກໍເພາະເຮົາຢາກໄດ້ລາງວັນແບບນັ້ນແລະມີພຽງພຣະອົງເທົ່ານັ້ນທີ່ປະທານໃຫ້ເຮົາໄດ້. ນັ້ນແມ່ນສິ່ງທີ່ໂປໂລໄດ້ສແວງຫາ: "ນອກຈາກ

ນັ້ນ, ຂ້າພະເຈົ້າເຫັນວ່າສິ່ງສາລະພັດເປັນຂອງໄຮ້ປະໂຍດ ເມື່ອທຽບກັບຄຸນຄ່າທີ່ໄດ້ຮູ້ຈັກພຣະເຢຊູຄຣິດອົງພຣະຜູ້ເປັນເຈົ້າຂອງເຮົາ (ຟີລິບປອຍ 3:8 ).

ຄວາມເຊື່ອໄດ້ເປີດເຜີຍຄວາມເຂົ້າໃຈຂອງເຮົາໃຫ້ພົບຄວາມຈິງໃນການຊົງພຣະຊົນຢູ່ຂອງພຣະເຈົ້າ. ພວກເຮົາພົບວ່າທຸກສິ່ງນັ້ນມີຄວາມເປັນຈິງທີ່ສຳຄັນໃນການຊົງພຣະຊົນຢູ່ຂອງພຣະອົງ ສັນຕິສຸກ, ຄວາມຮັກ, ຄວາມຊົມຊື່ນຍິນດີ, ຄວາມຫວັງ, ແລະອື່ນໆ. ຄວາມເຊື່ອແມ່ນຄວາມໝັ້ນໃຈວ່າພຣະເຈົ້າແມ່ນໃຜແລະຣາຊອານາຈັກຂອງພຣະອົງໄດ້ມາຕັ້ງຢູ່ເພື່ອຄົນຂອງພຣະອົງ ເຮັດໃຫ້ເຮົາດຳເນີນຊີວິດຕາມທິດທາງທີ່ເຮົາດຳເນີນ ວັນນຶ່ງເຮົາຈະໄດ້ຢູ່ໃນສວັນເປັນຊີວິດແຫ່ງຊັຍຊະນະ.

- ຄວາມເຊື່ອທີ່ເຮັດໃຫ້ພຣະເຈົ້າພໍພຣະທັຍ ເຮັດໃຫ້ເຮົາໄດ້ຮັບຊັຍຊະນະ.
- ຄວາມເຊື່ອທີ່ໝັ້ນໃຈວ່າພຣະເຈົ້າອົງຊົງພຣະຊົນຢູ່ ເຮັດໃຫ້ເຮົາມີຊັຍຊະນະ..
- ຄວາມເຊື່ອທີ່ຮູ້ວ່າພຣະເຈົ້າຈະປະທານລາງວັນໃຫ້ເພາະເຮົາສແວງຫາພຣະອົງ ເຮັດໃຫ້ເຮົາມີຊັຍຊະນະ.

ໃຊ້ເວລາໃນອາທິດນີ້ອ່ານພຣະທຳເຮັບເຣີບົດ 11. ທ່ານຈະໄດ້ເຫັນຫລາຍຄົນທີ່ດຳເນີນຊີວິດຢ່າງເຊື່ອໝັ້ນໃນການຊົງພຣະຊົນຢູ່ຂອງພຣະເຈົ້າ, ການຊົງສະຖິດຢູ່ແລະລາງວັນ. ຊີວິດບໍ່ແມ່ນເຣື່ອງງ່າຍສຳລັບເຂົາເຈົ້າ ແທ້ຈິງມັນເປັນເຣື່ອງຍາກສຳລັບເຂົາເຈົ້າທຸກຄົນ ແຕ່ເຂົາເຈົ້າມີຄວາມອົດທົນຢ່າງໝັ້ນໃຈເພາະເຂົາເຈົ້າຮູ້ວ່າຄວາມເຊື່ອໃນພຣະເຈົ້າຈະເຮັດໃຫ້ເຂົາເຈົ້າໄດ້ຮັບຊັຍຊະນະ.

ເຖິງແມ່ນທ່ານປະເຊີນບັນຫາຄວາມຫຍຸ້ງຍາກ, ທ່ານສາມາດມີຊັຍຊະນະໃນພຣະຄຣິດ. ທັງຊາຍແລະຍິງໃນເຮັບເຣີບົດ 11 ໄດ້ເດີນທາງຜ່ານຄວາມຫຍຸ້ງຍາກ ເຊັ່ນກັນ, ບໍ່ວ່າສິ່ງໃດກຳລັງທ້າທາຍທ່ານຢູ່ ຈົ່ງກ້າຫານທີ່ຈະເຮັດຕາມບຸກຄົນເຫຼົ່ານີ້ທີ່ຕອບສນອງດ້ວຍຄວາມເຊື່ອ. ເມື່ອຄົນອື່ນໆ ຢືນດ້ວຍຄວາມໝັ້ນໃຈໃນພຣະຄຣິດໄດ້ ແລະທ່ານກໍເຮັດໄດ້ເຊັ່ນດຽວກັນ.

## ນຳໃຊ້ໃນຊີວິດ

**ທ່ານຈະສະແດງຄວາມເຊື່ອຂອງທ່ານຢ່າງໃດໃນອາທິດນີ້? ຈົ່ງພິຈາຣະນາເບິ່ງຄຳແນະນຳນີ້.**

- **ເຊື່ອວາງໃຈ.** ໃຊ້ເວລາຄາວນຶ່ງໃນແຕ່ລະວັນເພື່ອສະແດງອອກດ້ວຍຄຳເວົ້າວ່າທ່ານວາງໃຈໃນພຣະເຈົ້າຜ່ານທາງການອະທິຖານ. ບອກພຣະເຈົ້າວ່າທ່ານຈະວາງໃຈໃນພຣະອົງຕລອດທັງວັນ, ແລະບອກກັບພຣະ ອົງວ່າເປັນຫຍັງທ່ານຈຶ່ງວາງໃຈໃນພຣະອົງ.
- **ຈົ່ງອ່ານ.** ອ່ານປື້ມພຣະຄັມພີເດີມກ່ຽວເຣື່ອງຜູ້ຊາຍແລະຜູ້ຍິງທີ່ໄດ້ກ່າວເຖິງໃນພຣະທັມເຮັບເຣີບົດ 11. ອ່ານກ່ຽວກັບການດຳເນີນຊີວິດຂອງເຂົາເຈົ້າທີ່ສະແດງອອກເຖິງຄວາມເຊື່ອ ແລະຄວາມໝັ້ນໃນພຣະເຈົ້າຢ່າງໃດ. ຈົ່ງຈົດບັນທຶກໄວ້ວ່າທ່ານໄດ້ຮຽນຫຍັງແດ່ຈາກແຕ່ລະຄົນ.
- **ຈົ່ງໜູນໃຈ. ເຖິງແມ່ນ**ພຣະເຈົ້າໄດ້ໃຊ້ການດຳເນີນຊີວິດຂອງຄົນເຫລົ່ານັ້ນໃນເຮັບເຣີ 11 ເພື່ອໜູນໃຈພວກເຮົາ, ເລືອກທີ່ຈະໃຫ້ການໜູນນ້ຳໃຈແກ່ຄົນອື່ນ. ໜູນນ້ຳໃຈໃນຄວາມເຊື່ອແລະຄວາມໄວ້ວາງໃຈຂອງເຂົາເຈົ້າໃນພຣະຄຣິດ ໂດຍບອກເຂົາເຈົ້າວ່າທ່ານເຊື່ອໄວ້ວາງໃຈພຣະຄຣິດຢ່າງໃດໃນປະສົບປະການທີ່ຄືກັນນີ້.

ຢ່າໃຫ້ຜູ້ໃດບອກທ່ານກະໂດດຂ້າມໄປສູ່ຄວາມເຊື່ອເໝືອນກັບຕາບອດ ເພາະນັ້ນບໍ່ແມ່ນຄວາມເຊື່ອ. ເລືອກທີ່ຈະໄວ້ວາງໃຈໃນພຣະເຈົ້າເພາະທຸກສິ່ງທີ່ພຣະອົງໄດ້ກະທຳເພື່ອທ່ານແລະຄົນທີ່ຢູ່ອ້ອມຮອບທ່ານ. ຄວາມໄວ້ວາງໃຈນັ້ນຈະນຳພາເຮົາໃຫ້ໄດ້ຮັບຊັຍຊະນະໃນຄວາມເຊື່ອ.

**ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.**